ລັດຖະບານເຢັຽລະມັນໃຫ້ຂໍ້ຜູກມັດຈະສະໜັບສະໜູນການຮ່ວມມືທາງວິຊາການ
ມູນຄ່າ 3 ລ້ານ ເອີໂຣ ແກ່ວຽກງານການຄຸ້ມຄອງອ່າງໂຕ່ງໄລຍະ III ຂອງ MRC

MRC No. 20/08

ມື້ນີ້ກະຊວງການຮ່ວມມື ແລະ ພັດທະນາດ້ານເສດຖະກິດແຫ່ງສະຫະພັນເຢັຽລະມັນ (BMZ) ໄດ້ເຊັນບົດພັນທະ ໃນການຊ່ວຍເຫຼືອມູນຄ່າ 3 ລ້ານເອີໂຣ ເປັນຊ່ວງເວລາ 2.5 ປີ ( ເດືອນທັນວາ 2008- ພຶດສະພາ 2009) ສຳລັບການຮ່ວມມືດ້ານວິຊາການ ໂດຍຜ່ານອົງການ GTZ ເພື່ອສະໜັບສະໜູນວຽກງານຂອງຄະນະກຳມາທິການແມ່ນ້ຳຂອງສາກົນ (MRC).

ບົດຜູກມັດການໃຫ້ທຶນໄດ້ຖືກເຊັນທີ່ ວຽງຈັນ ໂດຍ ນາງ ເຄີສະຕິນ ເຮັນເກີ, ເຈົ້າໜ້າທີ່ຜູ້ຕາງໜ້າປະຈຳ ສປປລາວ, ກຳປູເຈັຽ, MRC ໃນນາມກະຊວງ ການຮ່ວມມື ແລະ ພັດທະນາເສດຖະກິດແຫ່ງສະຫະພັນເຢັຽລະມັນ ແລະ ທ່ານ ເຈເຣມີ ເບີດ, ຫົວໜ້າຜູ້ບໍລິຫານຂອງ MRC.

ປະເທດເຢັຽລະມັນໄດ້ໃຫ້ການສະໜັບສະໜູນແກ່ MRC ເປັນເວລາຫລາຍປີ ໂດຍເນັ້ນໃສ່ສະເພາະວຽກງານການຄຸ້ມຄອງອ່າງໂຕ່ງແບບຍືນຍົງພາຍໃຕ້ແຜນງານກະສິກຳ, ຊົນລະປະທານ ແລະ ປ່າໄມ້ (AIFP) ແລະ ອົງປະກອບທີ 4 ແລະ ທີ 5 ຂອງແຜນງານການຄຸ້ມຄອງ ແລະ ບັນເທົາອຸທົກກະໄພ (FMMP) ຂອງ MRC. ການສະນັບສະໜູນນີ້ຈະຖືກສືບຕໍ່ໃຊ້ໃນໂຄງການຄຸ້ມຄອງອ່າງໂຕ່ງຂອງ MRC-GTZ ໄລຍະທີ III.

ການຮ່ວມມືດ້ານວິຊາການດັ່ງກ່າວນີ້ແມ່ນເປັນໄປຕາມນະໂຍບາຍລວມຂອງລັດຖະບານເຢັຽລະມັນເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາແບບຍືນຍົງ. ການຮ່ວມມືດ້ານວິຊາການຂອງເຢັຽລະມັນຈະປະກອບສ່ວນສ້າງຄວາມອາດສາມາດໃນການຄຸ້ມຄອງອ່າງໂຕ່ງ ແລະ ກິດຈະກຳໃນການປັບຕົວຂອງການປ່ຽນແປງດິນຟ້າອາກາດໃນອ່າງແມ່ນ້ຳຂອງ. ໂດຍສະເພາະແມ່ນໂຄງການຮ່ວມຈະຊ່ວຍໃນການປັບປຸງກອບວຽກງານຂອງອົງກອນ ເພື່ອສຶກສານຳຮ່ອງຂອງອ່າງໂຕ່ງໃນລະດັບພູມມິພາກ ແລະ ລະດັບຊາດ ໃນ 4 ປະເທດແມ່ນ້ຳຂອງຕອນລຸ່ມ ເພື່ອຮັບປະກັນການພັດທະນາແບບຍືນຍົງໃນເຂດພື້ນທີ່ອ່າງໂຕ່ງ.

ທ່ານ ເບີດ ໄດ້ກ່າວຂອບໃຈຕໍ່ລັດຖະບານເຢຍລະມັນສໍາລັບການສະໜັບສະໜູນທີ່ຕໍ່ເນື່ອງ ແລະ ເອື້ອເຟື້ອຕໍ່ວຽກງານຂອງ MRC ແລະ ກ່າວວ່າການໃຫ້ທຶນຄັ້ງໃໝ່ນີ້ເປັນການສະໜັບສະໜູນທີ່ມີຄ່າໃຫຍ່ຫຼວງ ເພື່ອຊ່ວຍໃຫ້ MRC ສາມາດບັນລຸແຜນຍຸດທະສາດ 2006-2010 ທີ່ໄດ້ວາງໄວ້.

ທ່ານ ຍັງກ່າວອີກວ່າ "ແຜນຍຸດທະສາດຂອງພວກເຮົາມີຈຸດປະສົງລວມເພື່ອສົ່ງເສີມການພັດທະນາແບບຍືນຍົງພາຍໃນອ່າງ ເພື່ອຫຼຸດຜ່ອນຄວາມທຸກຍາກ" ສິ່ງເຫຼົ່ານີ້ຈະພົວພັນເຖິງປະເດັນການວາງແຜນ, ການປ່ຽນແປງຂອງສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ. ການສະໜັບສະໜູນຂອງລັດຖະບານເຢຍລະມັນດັ່ງກ່າວຈະແນ່ໃສ່ຊ່ວຍພວກເຮົາໃນ ການຮອງຮັບຕໍ່ບັນດາປະເດັນດັ່ງກ່າວລວມທັງການເສີມສ້າງຄວາມອາດສາມາດ ແລະ ຄວາມຮູ້ໃນອ່າງແມ່ນໍ້າຂອງ.